ຂໍຂອບໃຈນຳອ້າຍ        ຊາຍຊື່ສີສັກດາ

ດອນໄດ້ວາຈາດອມ      ຮ່ວມໂນຮິນອ້າຍ
ຈຶ່ງເປັນສາຍສັມພັນໃຫ້  ທາງໄກໄດ້ສົ່ງຂ່າວ
ເຖິງຊາວລາວພີ່ນ້ອງ    ຜູ້ຄອງຖ້າອ່ານກອນ

ທົ່ວທຸກບ່ອນເພີ່ນແຈ້ງ    ຖແລງຂ່າວເປັນສຽງຫວານ
ໂຄສົກຈັດລາຍການ     ອ່ານກະວີຂອງນ້ອງ
ສຸຂຂືນຄຳບໍ່ເຄີຍຂ້ອງ  ກະຈາຍສຽງໄດ້ນຳສົ່ງ
ເຖິງພົງພັນພີ່ນ້ອງ     ເໜືອໃຕ້ຊື່ວ່າລາວ  ທ່ານເອີຍ

ອັນນີ້ເປັນບາດກ້າວ   ຄືນສູ່ເວທີ
ສີສັກດາຜູ້ໃຈດີ        ທີ່ຊ່ວຍແປງທາງໄວ້
ໄດ້ກັບຄືນມາແຄວ້ນ    ແດນກະວີອີກຄັ້ງໃໝ່
ກຳລັງໃຈແມ່ນພວກອ້າຍ   ໄດ້ໄຂຂໍ້ຕໍ່ນາງ  ແທ້ດາຍ

ດຽວນີ້ດອນຊິຕັ້ງ         ໃຈຕໍ່ການຂຽນ
ຈະພາກພຽນມານະ    ເພື່ອທຸກຄົນທີ່ຄອຍນ້ອງ
ໃຫ້ອ້າຍຄອງຄອຍຖ້າ   ກະວີນາງຊິຂຽນສົ່ງ
ໃຈປະສົງຊິສືບສ້າງ    ຜູ້ໄລຮ້າງຫ່າງລາ  ອ້າຍເອີຍ

ສີສັກດາອ້າຍກ່າວຕ້ານ    ຕິດຕາມອ່ານເປັນປະຈຳ
ທັງຫ່ວງນຳສາວຫຼັກ 7    ເມັດນ້ຳຕານເມືອງໃຕ້
ນາງຈາກໄປບໍ່ຫວັງຢ້ອນ    ສີພັນດອນມາແທນທີ່
ສິ່ງໃດດີຊິຮັບໄວ້            ພູມໃຈອ້າຍທີ່ຫ່ວງນາງ

ຂອບໃຈອ້າຍ ສີສັກດາ ພະວໍຣະຈິດ

ໂດຍະ ສີພັນດອນ   ດອກບົວກາງວັນ